ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 0984 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2020

# ແຈ້ງການ

ເຖິງ: ບັນດາກະຊວງ, ອົງການ, ສະຖານທູດ, ໂຄງການ ແລະ ບັນດາບໍລິສັດນຳເຂົ້າ ແລະ ສົ່ງອອກຍານພາຫະນະ.

ເລື່ອງ: ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າພາຫະນະ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ).

- ອີງຕາມແຈ້ງການ ຂອງ ກົມພາສີ ເລກທີ 00609/ກພສ, ລົງວັນທີ 03 ກຸມພາ 2020 ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1.

ກົມການນຳເຂົ້າ ແລະ ສົ່ງອອກ (ກົມ ຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ໂດຍອີງຕາມແຈ້ງການຂອງ ກົມພາສີ ເລກທີ 00609/ກພສ, ກົມ ຂອ ຈະພິຈາລະນາອອກໃບອະນຸຍາດນຳເຂົ້າສິນຄ້າປະເພດຍານພາຫະນະ ທີ່ນຳຜ່ານ ຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ) ໂດຍອະນຸຍາດຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ເທົ່ານັ້ນ, ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດກັບການນຳເຂົ້າເພື່ອມາຈຳໜ່າຍ ແຕ່ວັນທີ 17 ກຸມພາ 2020. ສຳລັບການນຳເຂົ້າຮູບການອື່ນເຊັ່ນ: ການນຳເຂົ້າຂອງບັນດາກະຊວງ, ໂຄງການ, ສະຖານທູດ, ອົງການຈັດຕັ້ງພາຍໃນ ແລະ ສາກົນ ພາຍໃຕ້ລະບອບຍົກເວັ້ນພາສີ ແລະ/ຫຼື ອາກອນ ແມ່ນຈະເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01 ມີນາ 2020 ເປັນຕົ້ນໄປ. ພາກສ່ວນໃດທີ່ຍັງບໍ່ທັນໄດ້ລົງທະບຽນນຳໃຊ້ລະບົບ LNSW ແມ່ນໃຫ້ຮີບຮ້ອນລົງທະບຽນນຳໃຊ້ໂດຍໄວ, ໂດຍພົວພັນ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ ເພື່ອຂໍຮັບການຝຶກອົບຮົມ ແລະ ລົງທະບຽນຂໍລະຫັດຜູ້ນຳໃຊ້ລະບົບດັ່ງກ່າວໂດຍດາວໂຫຼດເອົາແບບຟອມໄດ້ໃນເວັບໄຊ www. prod.laonsw.net ຫຼື ເວັບໄຊ www.laotradeportal.gov.la

ສຳລັບການນຳເຂົ້າຜ່ານດ່ານພາສີສາກົນອື່ນແມ່ນສາມາດສືບຕໍ່ນຳໃຊ້ລະບົບເຈັ້ຍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ,

ສຸລິຍົນ ພິລາວົງ